ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 001....../ທຄຕລ 2018
ນະຄອນຫຼວງວຽງຈັນ, ວັນທີ, 29 JAN 2018

# ມະຕິ
## ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝສາມັນ ຄັ້ງທີ 1 ປະຈຳປີ 2018, ວັນທີ 26/01/2018

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝສາມັນ ຄັ້ງທີ 1 ປະຈຳປີ 2018 ໄດ້ເປີດຂຶ້ນໃນເວລາ 13:30 ໂມງ ຂອງວັນທີ 26/01/2018 (ຕໍ່ໄປນີ້ຮຽກວ່າ "ກອງປະຊຸມ") ທີ່ສຳນັກງານໃຫຍ່ ທຄຕລ ໂດຍການເປັນປະທານຂອງ ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ, ປະທານສະພາບໍລິຫານ ທຄຕລ, ມີສະມາຊິກສະພາບໍລິຫານ ແລະ ຜູ້ສັງເກດການເຂົ້າຮ່ວມຕາມລາຍຊື່ຊ້ອນທ້າຍ.

**ກອງປະຊຸມ ໄດ້ປຶກສາຫາລືບັນຫາຕ່າງໆພ້ອມທັງໄດ້ມີມະຕິຕົກລົງດັ່ງນີ້:**

1. ຮັບຊາບ ຜົນການດຳເນີນງານ ແລະ ຜົນການດຳເນີນທຸລະກິດ (ຕາມບັນຊີ ທຄຕລ) ປະຈຳປີ 2017 ທີ່ຜົນການດຳເນີນງານແມ່ນໄປຕາມແຜນການທີ່ໄດ້ວາງໄວ້.
2. ຮັບຮອງສັດສ່ວນການແບ່ງປັນກຳໄລຫຼັງອາກອນປະຈຳປີ 2017 ເພື່ອນຳສະເໜີກອງປະຊຸມຜູ້ຖືຮຸ້ນ ພິຈາລະນາຮັບຮອງ:
   - ແບ່ງເຂົ້າຄັງສຳຮອງຕາມກົດໝາຍ 10%
   - ແບ່ງເຂົ້າຄັງຂະຫຍາຍທຸລະກິດຂອງທະນາຄານ 10%
   - ແບ່ງເຂົ້າກຳໄລ-ຂາດທຶນສະສົມ 30%
   - ຈ່າຍເງິນປັນຜົນ 50%
3. ຮັບຮອງແຜນປະຈຳປີ 2018 ຂອງ ທຄຕລ ເພື່ອນຳສະເໜີກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ.
4. ຮັບຮອງເອົາ: ໂຄງສ້າງການບໍລິຫານຄວາມສ່ຽງ ທຄຕລ, ນະໂຍບາຍການບໍລິຫານຄວາມສ່ຽງດ້ານການດຳເນີນງານ, ນະໂຍບາຍການບໍລິຫານຄວາມສ່ຽງດ້ານຊື່ສຽງ ແລະ ນະໂຍບາຍ AML/CFT ສະບັບປັບປຸງ.
5. ຮັບຮອງເອົາວັນທີ 05/04/2018 ເປັນມື້ປິດປຶ້ມທະບຽນຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການ ຮັບເງິນປັນຜົນ ແລະ ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນປະຈຳປີ 2017.

ກອງປະຊຸມ ໄດ້ປິດລົງໃນເວລາ 16:15 ໂມງ ຂອງວັນດຽວກັນ.

**ປະທານສະພາບໍລິຫານ ທຄຕລ**

**ປອ. ບຸນເຫຼືອ ສິນໄຊວໍຣະວົງ**

ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245, Website: www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA